ກະຊວງວິທະຍາສາດແລະເຕັກໂນໂລຊີ
ສະບຽນຂາເຂົ້າ
ເລກທີ 1139 ກວຕ
ລົງວັນທີ 12 JUN 2014
ເວລາ 11 30
ສົ່ງເຖິງ........................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---====0000====----

ກະຊວງຍຸຕິທຳ | ເລກທີ 434 /ກຍ

ນະຄອນຫຼວງວຽງຈັນ, ວັນທີ 10 JUN 2014

**ຮຽນ: ທ່ານ ລັດຖະມົນຕີວ່າການ ກະຊວງວິທະຍາສາດ ແລະເຕັກໂນໂລຊີ ທີ່ນັບຖື**

**ເລື່ອງ: ຮ່າງ ດຳລັດວ່າດ້ວຍ ການຖ່າຍທອດເຕັກໂນໂລຊີ**

ອີງຕາມໜັງສືສະເໜີຂອງທ່ານ ສະບັບເລກທີ 0350/ກວຕ, ລົງວັນທີ 28 ພຶດສະພາ 2014 ກ່ຽວກັບ ຮ່າງ ດຳລັດວ່າດ້ວຍ**ການຖ່າຍທອດເຕັກໂນໂລຊີ**ນັ້ນ,

ຂ້າພະເຈົ້າ ຂໍຖືເປັນກຽດ ຮຽນມາຍັງທ່ານຊາບວ່າ ກະຊວງຍຸຕິທຳ ໄດ້ກວດກາຄວາມສອດຄ່ອງທາງດ້ານກົດໝາຍຂອງຮ່າງດຳລັດດັ່ງກ່າວແລ້ວ, ໂດຍປະຕິບັດຕາມມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກຸມພາ 2013 ປະໂຫຍກ ສຸດທ້າຍ, ວັກສຸດທ້າຍ ຂໍ້ 2 ຂອງ ຂໍ້ II ໄດ້ຊີ້ນຳວ່າ: “ **ຕໍ່ໄປໃຫ້ປະຕິບັດຕາມຈິດໃຈ ທີ່ໄດ້ເອກະພາບກັນມາແລ້ວຄື ລັດຖະບານ ຈະບໍ່ອອກດຳລັດແນະນຳການຈັດຕັ້ງປະຕິບັດກົດໝາຍໃດໜຶ່ງອີກ** ” ແລະປະຕິບັດຕາມ ມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກໍລະກົດ 2013 ຂໍ້ 9 ທີ່ຊີ້ນຳໃນປະໂຫຍກໜຶ່ງວ່າ: “...... **ບັນຫາໃດຄວນເອົາເຂົ້າຜ່ານກອງປະຊຸມລັດຖະບານ, ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຫຼືສະເໜີໃຫ້ນາຍົກລັດຖະມົນຕີຕົກລົງ ແລະບັນຫາໃດ ແມ່ນຮອງນາຍົກເປັນຜູ້ຕົກລົງເລີຍ ຫຼືແມ່ນລັດຖະມົນຕີກະຊວງກ່ຽວຂ້ອງ ຕ້ອງຕົກລົງເອງດ້ວຍການຍົກສູງຄວາມເປັນເຈົ້າການ ແລະຄວາມຮັບຜິດຊອບຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະໄດ້ຕົກລົງເປັນຫຼັກການໄວ້ແລ້ວ, ບັນຫາໃດ ເຫັນວ່າຍັງບໍ່ທັນແຈ້ງ ກໍນຳມາປັບປຸງແກ້ໄຂໄວ. ....** ” ນັ້ນ

ຈຶ່ງຂໍມີຄຳເຫັນທາງດ້ານຫຼັກການ ດັ່ງນີ້:

1). ການຖ່າຍທອດເຕັກໂນໂລຊີ ແມ່ນວຽກງານການບໍລິການດ້ານວິທະຍາສາດ ແລະເຕັກໂນໂລຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ແລະມາດຕາ 21 ຂອງກົດໝາຍວ່າດ້ວຍວິທະສາດ ແລະເຕັກໂນໂລຊີ ສະບັບເລກທີ 30/ສພຊ, ລົງວັນທີ 19 ກໍລະກົດ 2013. ການອອກດຳລັດສະບັບນີ້ ກໍເພື່ອຜັນຂະຫຍາຍກົດໝາຍດັ່ງກ່າວ. ຖ້າອອກເປັນດຳລັດຕື່ມອີກ ກໍເປັນການຊ້ຳຊ້ອນກັບກົດໝາຍ ຊຶ່ງເປັນຜົນໃຫ້ກົດໝາຍບໍ່ເປັນທີ່ເຊື່ອຖື.

ສະນັ້ນ, ເພື່ອໃຫ້ສອດຄ່ອງກັບການຄຸ້ມຄອງຕາມຂະແໜງການໂດຍກົດໝາຍກຳນົດໄວ້ ແລະຕາມມະຕິຂອງກອງປະຊຸມລັດຖະບານດັ່ງທີ່ກ່າວມາເທິງນັ້ນ **ຈຶ່ງສະເໜີໃຫ້ກະຊວງ** ວິທະຍາສາດ ແລະເຕັກ**ໂນໂລຊີ ອອກເປັນນິຕິກຳລຸ່ມກົດໝາຍ ເພື່ອແນະນຳປະຕິບັດກົດໝາຍດັ່ງກ່າວກ່ຽວກັບການຖ່າຍທອດ ແລະການເຮັດສັນຍາ ເຕັກໂນໂລຊີ ດ້ວຍການອອກເປັນ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ລະບຽບການ ຂອງລັດຖະມົນຕີວ່າການ ກະຊວງ ວຕ ຫຼືຄູ່ມືໃນການຈັດຕັ້ງປະຕິບັດກົດໝາຍຕາມຄວາມເໝາະສົມ** ໂດຍໃຫ້ເນື້ອ

ໃນສອດຄ່ອງກັບກົດໝາຍກຳນົດໄວ້ ແລະຢູ່ພາຍໃຕ້ຂອບເຂດສິດ ແລະໜ້າທີ່ໃນການອອກນິຕິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012, ເພື່ອສະດວກ ແລະງ່າຍ ໃຫ້ແກ່ການຈັດຕັ້ງປະຕິບັດ. **ເປັນການດີທີ່ສຸດນັ້ນ ສະເໜີໃຫ້ອອກເປັນຄຳແນະນຳ ເພາະສາມາດແນະນຳໄດ້ລະອຽດ ໂດຍແນະນຳເປັນຂໍ້ໃຫຍ່, ຂໍ້ນ້ອຍໄປ ບໍ່ຕ້ອງຂຽນເປັນມາດຕາໆ,** ບັນຫາໃດທີ່ໄດ້ກຳນົດໄວ້ໃນກົດໝາຍ ຊຶ່ງສາມາດນຳໃຊ້ຮ່ວມກັນໄດ້ແລ້ວ ກໍບໍ່ຈຳເປັນຕ້ອງນຳມາກຳນົດໃສ່ອີກ ໝາຍວ່າບໍ່ຕ້ອງຮ່າງໄປຕາມຮູບແບບຂອງການຮ່າງກົດໝາຍທຸກຢ່າງ.

2). ນິຕິກຳທີ່ອອກໂດຍກະຊວງ ຊຶ່ງຕາມກົດໝາຍໃຫ້ສິດນັ້ນ ກໍຖືວ່າມີຜົນປະຕິບັດໄດ້ເທົ່າກັບກົດໝາຍ. ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງໃດ ຫາກບໍ່ປະຕິບັດຕາມ ກໍແມ່ນຝ່າຝືນ ຫຼືລະເມີດຂໍ້ກຳນົດຂອງກົດໝາຍ ເຊັ່ນກັນ ແລະສາມາດນຳມາດຕະການທາງກົດໝາຍມາບັງຄັບໃຊ້ໄດ້ ຕາມແຕ່ລະກໍລະນີເບົາ ຫຼືໜັກ ຕໍ່ການລະເມີດດັ່ງກ່າວ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາປະຕິບັດຕາມລະບຽບການທີ່ກ່າວມາເທິງນັ້ນ. ກະຊວງຍຸຕິທຳ ຍິນດີໃຫ້ຄວາມຮ່ວມມືໃນການປຶກສາຫາລື, ແນະນຳທາງດ້ານເຕັກນິກວິຊາການສະເໝີ.

ຕ. **ລັດຖະມົນຕີວ່າການ,**

**ສຈ.ເກດ ກຽດຕິສັກ**

**ຮຽນສົ່ງ:**

- ທ່ານ ລັດຖະມົນຕີ, ຫົວໜ້າ ຫ້ອງວ່າການລັດຖະບານ 1 ສະບັບ (ເພື່ອໃຊ້ຕາງລາຍງານ ແລະກວດກາ).
- ກົມກົດໝາຍ ຫ້ອງວ່າການລັດຖະບານ 1 ສະບັບ (ເພື່ອຊາບ ແລະກວດກາ).